# ສິ່ງທີ່ຄາດຫວັງ:
# ຂໍ້ຄວາມການເຂົ້າຫາສະຖານທີ່ສັກຢາວັກຊີນຂອງລັດມີນີໂຊຕາ

[ການເລົ່າເລື່ອງ]

ລັດມີນີໂຊຕ້າ ມີໜ້າທີ່ໃນການນຳສະເໜີການເຂົ້າເຖິງສະຖານທີ່ສັກຢາວັກຊີນສຳລັບພົນລະເມືອງມິນນີໂຊຕ້າທຸກຄົນ.

ວິດີໂອນີ້ສະແດງໃຫ້ທ່ານເຫັນວ່າ ທ່ານຈະພະເຊີນກັບຫຍັງແດ່ ເມື່ອທ່ານເຂົ້າໄປທີ່ສະຖານທີ່ສັກຢາວັກຊີນໃນຊຸມຊົນຂອງລັດ.

ເມື່ອທ່ານມາຮອດສະຖານທີ່ສັກຢາວັກຊີນ, ທ່ານຈະເຫັນປ້າຍບອກທາງເຂົ້າຫາສະຖານທີ່.

ພະນັກງານຮັບຕ້ອນ ອາດຈະກວດອຸນະພູມຂອງທ່ານ ແລະ ຈະໃຫ້ທ່ານປ່ຽນ ຫຼື ປົກຜ້າອັດດັງທີ່ທ່ານກຳລັງໃຊ້ຢູ່ດ້ວຍຜ້າອັດດັງຊະນິດໃຊ້ແລ້ວຖິ້ມ ແລະ ມີຄວາມສະອາດ.

ພະນັກງານສາມາດໃຫ້ຄວາມຊ່ວຍເຫຼືອຕາມທີ່ທ່ານຕ້ອງການໃນເວລາທີ່ມີການນັດສັກຢາວັກຊີນຂອງທ່ານ. ສະຖານທີ່ສັກຢາວັກຊີນຂອງລັດທຸກແຫ່ງ ມີການຊ່ວຍເຫຼືອດ້ານແປພາສາໃຫ້.

ຖ້າທ່ານມີຄຳຖາມສະເພາະ ຫຼື ຂໍຄວາມຊ່ວຍເຫຼືອ, ຈົ່ງໂທຫາສະຖານທີ່ສັກຢາວັກຊີນລ່ວງໜ້າ.

*[ຂໍ້ຄວາມຢູ່ໜ້າຈໍ] ເຂົ້າໄປທີ່: mn.gov/covid19/vaccine/find-vaccine/community-vaccination-program/index.jsp ເພື່ອຊອກເບີໂທລະສັບຂອງສະຖານທີ່ສັກຢາວັກຊີນ.*

ຢູ່ບ່ອນລົງທະບຽນ, ທ່ານອາດຈະຕ້ອງໃຫ້ສະແດງການຢັ້ງຢືນການນັດໝາຍຂອງທ່ານ. ທ່ານສາມາດພິມອອກ ຫຼື ສະແດງອີເມວຢັ້ງຢືນທາງໂທລະສັບຂອງທ່ານ.

ຫຼັງຈາກລົງທະບຽນແລ້ວ, ທ່ານອາດຈະຕ້ອງໄດ້ລໍຖ້າຕາມຄິວກ່ອນຈະໄດ້ຮັບຢາວັກຊີນຂອງທ່ານ. ບອກໃຫ້ພະນັກງານສັກຢາວັກຊີນຮູ້ ຖ້າທ່ານຕ້ອງການຕັ່ງນັ່ງໃນເວລາທີ່ທ່ານລໍຖ້າ.

ຍ່າງເຂົ້າໄປຫາພະຍາບານ ຖ້າວ່າເຫັນມີຄົນວ່າງ. ທ່ານສາມາດຖາມແບບສ່ວນຕົວ ເຊິ່ງຈະເຮັດໃຫ້ທ່ານຮູ້ສຶກສະດວກກວ່າ.

ພະຍາບານຈະເອົາບັດສັກຢາວັກຊີນໃຫ້ທ່ານ ຖ້ານີ້ແມ່ນເຂັມທຳອິດຂອງຢາວັກຊີນໂຄວິດ-19. ເກັບຮັກສາບັດໄວ້ໃນສະຖານທີ່ປອດໄພ, ແລະ ເອົາມາພ້ອມທ່ານ ຖ້າທ່ານຕ້ອງໄດ້ສັກຢາເຂັມທີສອງ.

ຫຼັງຈາກການສັກຢາວັກຊີນຂອງທ່ານ, ທ່ານຈະ ໃຫ້ລໍຖ້າປະມານ 15 ຫາ 30 ນາທີ ເພື່ອໃຫ້ແນ່ໃຈວ່າທ່ານບໍ່ມີຜົນຂ້າງຄຽງທີ່ຮ້າຍແຮງ.

ພະນັກງານຈະອະທິບາຍສິ່ງທີ່ຈະເຮັດຖ້າທ່ານຮູ້ສຶກບໍ່ຄ່ອຍດີ. ພະນັກງານທີ່ໄດ້ຮັບການຝຶກອົບຮົມ ເຊັ່ນ ພະຍາບານ ຫຼື ວິຊາການດູແລສຸຂະພາບສຸກເສີນ ຢູ່ປະຈໍາໃນສະຖານທີ່ເພື່ອຕອບຄໍາຖາມຂອງທ່ານ ແລະ ໃຫ້ການດູແລທ່ານ ຖ້າທ່ານຮູ້ສຶກບໍ່ສະບາຍ.

ຫຼັງຈາກ 15 ຫຼື 30 ນາທີຜ່ານໄປ, ແມ່ນທ່ານສໍາເລັດທຸກຂັ້ນຕອນ!

ຖ້າຍີ່ຫໍ້ວັກຊີນຂອງທ່ານຕ້ອງການໃຫ້ທ່ານສັກເຂັມທີສອງ, ຕ້ອງແນ່ໃຈວ່າ ທ່ານມີຕາຕະລາງນັດຢູ່ໃນປະຕິທິນຂອງທ່ານ.

ພະນັກງານຢູ່ໃນສະຖານທີ່ສາມາດເບິ່ງການນັດໝາຍຄັ້ງທີສອງຂອງທ່ານໃຫ້ແກ່ທ່ານ ຖ້າທ່ານບໍ່ສາມາດຈື່ວັນທີໄດ້.

ຂໍຂອບໃຈ ສໍາລັບການເຂົ້າມາຮັບຢາວັກຊີນ!

ຖ້າທ່ານມີຄໍາຖາມກ່ຽວກັບສະຖານທີ່ສັກຢາວັກຊີນຂອງລັດ, ເຂົ້າໄປທີ່ເວັບໄຊທ໌ https://mn.gov/covid19/vaccine/find-vaccine.

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

5/26/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989*